**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ...39.../ນຍ

ນະຄອນຫຼວງວຽງຈັນ, ວັນທີ..28.09.2016

# ຄຳສັ່ງ

## ວ່າດ້ວຍ ການເພີ່ມທະວີ ວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

- ອີງຕາມ ດຳລັດສະບັບເລກທີ 43/ລບ, ລົງວັນທີ 03 ກຸມພາ 2015 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ;
- ອີງຕາມ ແຜນຍຸດທະສາດແຫ່ງຊາດວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ສຳລັບປີ2011-2020 " ເສັ້ນທາງກ້າວສູ່ຄວາມປອດໄພ II ";
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ສະບັບເລກທີ 45/ຄຊກລ, ລົງວັນທີ 28 ກໍລະກົດ 2016

ໃນໄລຍະ ປີ 1964-73 ສະໄໝສົງຄາມ ຮຸກຮານຈາກພາຍນອກ ໄດ້ມີການຖິ້ມລະເບີດ ໃສ່ພື້ນແຜ່ນດິນລາວ ປະມານ 03 ລ້ານໂຕນ, ໃນນັ້ນ ມີລະເບີດລູກຫວ່ານ ປະມານ 270 ລ້ານໜ່ວຍ ແລະ ບົມໃຫຍ່ ປະມານ 04 ລ້ານໜ່ວຍ. ນັກວິຊາການທາງທະຫານ ປະເມີນວ່າ 30 ສ່ວນຮ້ອຍ ຂອງລະເບີດທີ່ຖິ້ມລົງມາ ແມ່ນ ບໍ່ທັນແຕກ ຊຶ່ງຍັງຕົກຄ້າງຢູ່ບັນດາແຂວງ ກວມເອົາເນື້ອທີ່ປະມານ 87 ພັນກິໂລຕາແມັດ ຂອງພື້ນທີ່ ທົ່ວປະເທດ.

ເຖິງວ່າ ສົງຄາມສິ້ນສຸດລົງ 40 ປີ ມາແລ້ວ ກໍຕາມ ແຕ່ລະເບີດບໍ່ທັນແຕກ ຍັງສືບຕໍ່ເປັນໄພອັນຕະລາຍ ຕໍ່ ປະຊາຊົນລາວບັນດາເຜົ່າ ເຮັດໃຫ້ມີຜູ້ເສຍຊີວິດ ແລະ ບາດເຈັບ ຈຳນວນຫຼວງຫຼາຍ ຍ້ອນປະຊາຊົນ ຍັງຮູ້ເທົ່າບໍ່ເຖິງການ ແລະ ມີພຶດຕິກຳສ່ຽງໃນການທຳມາຫາກິນ ເປັນຕົ້ນ ການຂຸດດິນທຳການຜະລິດ, ການດັງໄຟ, ການຫຼິ້ນຂອງເດັກນ້ອຍ, ການທັບມ້າງ, ການເຄື່ອນຍ້າຍ ລະເບີດບໍ່ທັນແຕກ. ລວມທັງ, ການພັດທະນາພື້ນຖານໂຄງລ່າງ ກໍຄື ໂຄງການລົງທຶນ ຂອງນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນເຂດທີ່ມີ ລະເບີດບໍ່ທັນແຕກ ບໍ່ໄດ້ເອົາໃຈໃສ່ ໃນການກວດກູ້ລະເບີດ ແລະ ຈຳນວນໜຶ່ງ ກໍໄດ້ກວດກູ້ລະເບີດບໍ່ທັນແຕກ ແຕ່ກໍບໍ່ຮັບປະກັນຄຸນນະພາບ ເຮັດໃຫ້ມີຄວາມສ່ຽງ ຕໍ່ການດຳລົງຊີວິດຂອງປະຊາຊົນລາວ ບັນດາເຜົ່າ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນໄລຍະສັ້ນ ແລະ ໄລຍະຍາວ. ສະນັ້ນ, ເພື່ອໃຫ້ເອົາໃຈໃສ່ ແລະ ເພີ່ມທະວີ ການໂຄສະນາ, ການກວດກູ້ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນສູງ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. **ການໂຄສະນາ ທີ່ມາ ແລະ ຄວາມອັນຕະລາຍ ຂອງລະເບີດບໍ່ທັນແຕກ ທີ່ຕົກຄ້າງ**

1.1 ໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ( ຄຊກລ ) ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບພື້ນທີ່ ລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ສາເຫດ ການເກີດອຸປະຕິເຫດ ຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ໃຫ້ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນ ຮັບຊາບ ຢ່າງທົ່ວເຖິງ, ພ້ອມທັງ ເຜີຍແຜ່ ຂໍ້ມູນ-ຂ່າວສານ ກ່ຽວກັບ

ສະພາບການ ຂອງລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ປະເທດເຮົາ ໃຫ້ປະຊາຊົນ ທັງພາຍໃນ ແລະ ຕ່າງປະເທດ ຮັບຮູ້ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ;

1.2 ໃຫ້ ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ຊີ້ນໍາ ພາກສ່ວນທີ່ກ່ຽວຂ້ອງ ໂຄສະນາ ທີ່ມາ ແລະ ຄວາມອັນຕະລາຍ ຂອງລະເບີດບໍ່ທັນແຕກທີ່ຕົກຄ້າງ ພ້ອມທັງ ວາງມາດຕະການປ້ອງກັນການເກີດອຸປະຕິເຫດ ຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ໃນເຂດຄວາມຮັບຜິດຊອບ ຂອງຕົນ;

1.3 ໃຫ້ ກະຊວງ ສຶກສາທິການ ແລະ ກິລາ ກໍານົດວິຊາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ເຂົ້າໃນຫຼັກສູດການສິດສອນ ຢູ່ຊັ້ນປະຖົມສຶກສາ ເຂດທີ່ມີລະເບີດບໍ່ທັນແຕກທີ່ຕົກຄ້າງ. ພ້ອມນັ້ນ, ກໍໃຫ້ມີການໂຄສະນາ, ຈັດກິດຈະກໍາ ກ່ຽວກັບ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ໃນຊັ້ນມັດທະຍົມ ແລະ ສະຖາບັນການສຶກສາຕ່າງໆ ໃນຂອບເຂດ ທົ່ວປະເທດ;

1.4 ໃຫ້ ກະຊວງ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ນໍາໃຊ້ສື່ຕ່າງໆ ໂຄສະນາ ທີ່ມາ ແລະ ຄວາມອັນຕະ ລາຍຂອງ ລະເບີດບໍ່ທັນແຕກທີ່ຕົກຄ້າງ ເພື່ອໃຫ້ປະຊາຊົນ, ຊຸມຊົນ ທີ່ມີລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ນັກທຸລະກິດ ເຂົ້າໃຈເຖິງຜົນຮ້າຍ ຂອງລະເບີດບໍ່ທັນແຕກທີ່ຕົກຄ້າງ ເປັນຕົ້ນ ທາງສື່ ວິທະຍຸກະຈາຍສຽງ, ໂທ ລະພາບ, ໜັງສືພິມ, ວາລະສານ ແລະ ສື່ສິ່ງພິມຕ່າງໆ;

1.5 ໃຫ້ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ເປັນເຈົ້າການ ປະສານສົມທົບກັບ ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ, ອົງການການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ ໂຄສະນາ ທີ່ມາ ແລະ ຄວາມອັນຕະລາຍຂອງລະ ເບີດບໍ່ທັນແຕກ ທີ່ຕົກຄ້າງ ໃຫ້ສອດຄ່ອງກັບ ທິດທາງແຜນການ ແລະ ນະໂຍບາຍ ຂອງລັດຖະບານ;

1.6 ໃຫ້ ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຄຸ້ມຄອງບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ຊື້-ຂາຍ ເສດໂລຫະ ຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ ທີ່ບໍ່ໄດ້ຮັບການຈັດ ການທາງດ້ານວິຊາການ ໃຫ້ມີຄວາມປອດໄພ, ລວມທັງ ນໍາໃຊ້ເຄື່ອງກວດໂລຫະຊອກຫາເຫຼັກເສດ ແລະ ມີພຶດຕິ ກໍາສ່ຽງ ຕໍ່ ລະເບີດບໍ່ທັນແຕກທີ່ຕົກຄ້າງ ເປັນຕົ້ນ ເຄື່ອນຍ້າຍ, ທັບມ້າງ, ເກັບຮັກສາ;

1.7 ໃຫ້ ກະຊວງ ປ້ອງກັນປະເທດ ປະສານ ສົມທົບ ກັບ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ ບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃນການຄຸ້ມຄອງ ອົງການກວດກູ້ ຫຼື ບໍລິສັດກວດກູ້ລະ ເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ນໍາເຂົ້າເຄື່ອງກວດໂລຫະ ແລະ ອຸປະກອນ ທໍາລາຍລະເບີດບໍ່ທັນແຕກ ທີ່ຕົກຄ້າງຕ່າງໆ. ພ້ອມນັ້ນ, ກໍໃຫ້ມີການຂຶ້ນທະບຽນ ແລະ ຄຸ້ມຄອງການນໍາໃຊ້ ຢ່າງເຂັ້ມງວດ.

## 2. ການກວດກູ້ ລະເບີດບໍ່ທັນແຕກ ທີ່ຕົກຄ້າງ

2.1 ໃຫ້ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ແນະນໍາ ກ່ຽວກັບ ມາດຕະຖານ ແຫ່ງຊາດ ໃນການກວດກູລະເບີດບໍ່ທັນແຕກ ທີ່ຕົກຄ້າງ, ພ້ອມທັງ ສະໜອງ ຂໍ້ມູນ ກ່ຽວກັບ ພື້ນທີ່ ທີ່ມີລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ປະເທດເຮົາ ໃຫ້ປະຊາຊົນ ທັງພາຍໃນ ແລະ ຕ່າງປະເທດ ຮັບຮູ້ຢ່າງເລິກເຊິ່ງ ແລະ ກວ້າງຂວາງ;

2.2 ໃຫ້ ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງໂຄງການ ລວມທັງ ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເປັນເຈົ້າການສົມທົບກັບ ຄະນະກໍາ ມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ເພື່ອດໍາເນີນ

ການກວດກາລະເບີດບໍ່ທັນແຕກທີ່ຕົກຄ້າງ ໃນພື້ນທີ່ໂຄງການ. ໃນກໍລະນີ ມີລະເບີດບໍ່ທັນແຕກທີ່ຕົກຄ້າງ ກໍໃຫ້ດຳເນີນການກວດກູ້ກ່ອນ ຈຶ່ງດຳເນີນການຈັດຕັ້ງປະຕິບັດ ໂຄງການ;

2.3 ໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ສົມທົບກັບ ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຊີ້ນຳ ບັນດາອົງການ ແລະ ບໍລິສັດເກັບກູ້ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຂອງລາວ ແລະ ຕ່າງປະເທດ ປະຕິບັດການສຳຫຼວດ ແລະ ການກວດກູ້ ລະເບີດບໍ່ທັນແຕກທີ່ຕົກຄ້າງ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ;

2.4 ມອບໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ກວດກາ ແລະ ຢັ້ງຢືນຮັບຮອງຄຸນນະພາບທຸກໆສະໜາມກວດກູ້ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ. ທຸກສະໜາມກວດກູ້ ເມື່ອເຮັດສຳເລັດການກວດກູ້ແລ້ວ ຕ້ອງມີໃບມອບຮັບເນື້ອທີ່ ແລະ ມີໃບຢັ້ງຢືນຮັບຮອງຄຸນນະພາບ.

3. ງົບປະມານ ກ່ຽວກັບ ວຽກງານລະເບີດບໍ່ທັນແຕກທີ່ຕົກຄ້າງ.

3.1 ໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ປະສານສົມທົບກັບ ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການທຽບເທົ່າກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນ ສ້າງແຜນການ ແລະ ແຜນງົບປະມານ ເພື່ອລະດົມທຶນຊ່ວຍເຫຼືອ ຈາກສາກົນ ແລະ ຈັດສັນທຶນສົມທົບ ຈາກລັດຖະບານ ເຂົ້າໃນວຽກງານແກ້ໄຂບັນຫາ ລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ;

3.2 ສຳລັບ ໂຄງການ ຂອງນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະປະຕິບັດ ຢູ່ເຂດທີ່ມີລະເບີດບໍ່ທັນແຕກທີ່ຕົກຄ້າງ ໃຫ້ເຈົ້າຂອງໂຄງການເປັນເຈົ້າການ ຈັດສັນງົບປະມານ ເພື່ອກວດກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ;

3.3 ໃຫ້ ກະຊວງ ແຜນການ ແລະ ການລົງທຶນ ແລະ ກະຊວງ ການເງິນ ຈັດສັນງົບປະມານແຫ່ງລັດເຂົ້າໃນວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ເພື່ອເປັນທຶນສົມທົບກັບທຶນທີ່ລະດົມ ຈາກອົງການຈັດຕັ້ງສັງຄົມ ແລະ ສາກົນ.

4. ບັນດາ ລັດຖະມົນຕີ ກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ;

5. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ